**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

**ສຳນັກງານນາຍົກລັດຖະມົນຕີ**

ເລກທີ 144 /ນຍ.

ນະຄອນຫຼວງວຽງຈັນ, ວັນທີ ໓.໐໖.໒໐໐໕

# ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການປະກາດໃຊ້ ແລະຈັດຕັ້ງປະຕິບັດ ການດັດແກ້ແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ 6 ເດືອນທ້າຍປີ ສົກປີ 2004-2005

---

- ອີງໃສ່ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ.ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6/5/2003
- ອີງໃສ່ ກົດຫມາຍວ່າດ້ວຍງົບປະມານແຫ່ງລັດ ຊຶ່ງປະກາດໃຊ້ໂດຍລັດຖະບັນຍັດ ຂອງປະທານປະເທດ ແຫ່ງ ສປປ. ລາວ ສະບັບເລກທີ 40 /ສປປ, ລົງວັນທີ 13 /08/ 1994;
- ອີງໃສ່ມະຕິ ຂອງກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ V, ສະບັບເລກທີ 23/ ສພຊ.V, ລົງວັນທີ 20 ພຶດສະພາ 2005 ວ່າດ້ວຍ ການຮັບຮອງເອົາ ການດັດແກ້ແຜນພັດທະນາ ເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ 6 ເດືອນທ້າຍປີ ສົກປີ 2004-2005.

## ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:

**ມາດຕາ 1:** ປະກາດໃຊ້ ແລະ ຈັດຕັ້ງປະຕິບັດ ການດັດແກ້ແຜນພັດທະນາເສດຖະກິດ-ສັງຄົມ ແລະງົບປະມານ ແຫ່ງລັດ 6 ເດືອນທ້າຍປີ ສົກປີ 2004-2005, ເລີ້ມແຕ່ວັນທີ 20 ພຶດສະພາ 2005 ເຖິງວັນທີ 30 ກັນຍາ ປີ 2005 ຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ.

**ມາດຕາ 2:** ການດັດແກ້ແຜນພັດທະນາເສດຖະກິດ - ສັງຄົມ ແລະ ງົບປະມານແຫ່ງລັດ 6 ເດືອນທ້າຍປີ ສົກປີ 2004-2005 ແມ່ນແຜນຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງ ຊາດ ຊຸດທີ V ໃຫ້ປະກົດຜົນເປັນຈິງ, ໃນການຈັດຕັ້ງປະຕິບັດບັນດາຕົວເລກຄາດໝາຍ ແລະ ການ ດຸ່ນດ່ຽງໃຫຍ່ ຂອງເສດຖະກິດ ມະຫາພາກ ທີ່ໄດ້ກຳນົດໄວ້ ຊຶ່ງແມ່ນການຮັບປະກັນ ການເກັບລາຍ ຮັບ ງົບປະມານ ແລະການປະຕິບັດລາຍຈ່າຍ ຢ່າງມີຈຸດສຸມ; ສຸມໃສ່ຊຸກຍູ້ຕິດຕາມກວດກາ

ການຈັດ ຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດ ທີ່ໄດ້ອະນຸມັດ ຢູ່ ໃນ ແຜນແລ້ວ, ພ້ອມກັນນັ້ນ ກໍສຸມໃສ່ການຄົ້ນຄວ້າສ້າງແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 5 ປີ ຄັ້ງທີ VI (2006-2010); ສຸມໃສ່ຂະບວນການຜະລິດ, ທຸລະກິດ ແລະ ການບໍລິການ; ການລຶບລ້າງຄວາມທຸກຍາກ, ຫລຸດຜ່ອນເນື້ອທີ່ການຖາງປ່າເຮັດໄຮ່ ແລະລຶບລ້າງເນື້ອທີ່ການປູກຝິ່ນ ໃຫ້ໄດ້ຕາມແຜນການ ປີ ທີ່ໄດ້ກຳນົດໄວ້; ສຸມໃສ່ຄຸ້ມຄອງ ແລະປົກປັກຮັກສາປ່າໄມ້; ເອົາໃຈໃສ່ຄຸ້ມຄອງ ການສຳຫຼວດ ແລະຂຸດຄົ້ນ ແຮ່ທາດຕ່າງໆ, ສືບຕໍ່ປັບປຸງຄຸນນະພາບການສຶກສາ; ປັບປຸງກົງຈັກການຈັດຕັ້ງ ແລະແບບແຜນວິທີເຮັດວຽກໃນບັນດາຂະແໜງການ ຂັ້ນສູນກາງ ແລະທ້ອງຖິ່ນເປັນຕົ້ນຂະແໜງການ ເສດຖະກິດ ແລະການເງິນ.

**ມາດຕາ 3: ການດັດແກ້ໂຄງການລົງທຶນ ຂອງລັດ ມີດັ່ງນີ້:**

ດັດແກ້ໂຄງການລົງທຶນຂອງລັດ ທີ່ບໍ່ທັນກຽມພ້ອມ ແລະ ອວ່າຍທຶນດັ່ງກ່າວໄປໃສ່ໂຄງການອື່ນທີ່ເຫັນວ່າຈະໄດ້ນຳໃຊ້ເຂົ້າໃນການຜະລິດໂດຍໄວ ແລະມີປະສິດທິຜົນ ໂດຍດັດສະເລ່ຍທົ່ວປະເທດ ທັງໝົດ 131 ໂຄງການ ມູນຄ່າ 17,99 ຕື້ກີບ ລາຍລະອຽດ ຄື :

- ໂຄງການໂຈະ ແລະ ຫລຸດທຶນ ລວມມີ 64 ໂຄງການ ມູນຄ່າ 17,99 ຕື້ກີບໃນນີ້ : ໂຄງການທີ່ໂຈະທຶນ ມີ 45 ໂຄງການ ມູນຄ່າ 7,04 ຕື້ກີບ ແລະ ໂຄງການທີ່ ຫລຸດທຶນລົງ ມີ19 ໂຄງການ ມູນຄ່າ 10,95 ຕື້ກີບ.
- ໂຄງການສືບຕໍ່ສະເໜີເພີ່ມທຶນຕື່ມ ແລະ ສະເໜີໃໝ່ ລວມມີ 67 ໂຄງການ ມູນຄ່າ 17,99 ຕື້ກີບ ໃນນີ້ : ໂຄງການສືບຕໍ່ ສະເໜີເພີ່ມທຶນຕື່ມ ມີ 42 ໂຄງການ ມູນຄ່າ 11,42 ຕື້ກີບ ແລະໂຄງການສະເໜີໃໝ່ ມີ 25 ໂຄງການ ມູນຄ່າ 6,57 ຕື້ກີບ.

**ມາດຕາ 4: ການດັດແກ້ລາຍຮັບ-ລາຍຈ່າຍງົບປະມານ ມີດັ່ງນີ້:**

- ດັດແກ້ແຜນລາຍຮັບງົບປະມານ ທີ່ກອງປະຊຸມສະໄໝສາມັນເທື່ອທີ່ 6 ສະພາແຫ່ງຊາດ ຊຸດທີ V ທີ່ຮັບຮອງເອົາ 4.084 ຕື້ກີບ, ດັດແກ້ມາເປັນ 4.005 ຕື້ກີບ, ໃນນັ້ນ:
  - ລາຍຮັບພາຍໃນ 3.600 ຕື້ກີບ, ດັດແກ້ມາເປັນ 3.467 ຕື້ກີບ, ຫລຸດລົງ 133 ຕື້ກີບ.
  - ລາຍຮັບຈາກການຊ່ວຍເຫຼືອລ້າ 484 ຕື້ກີບ, ດັດແກ້ມາເປັນ 538 ຕື້ກີບ, ເພີ່ມຂຶ້ນ 54 ຕື້ກີບ.
- ດັດແກ້ແຜນລາຍຈ່າຍງົບປະມານ ທີ່ກອງປະຊຸມສະໄໝສາມັນເທື່ອທີ່ 6 ສະພາແຫ່ງຊາດ ຊຸດທີ V ຮັບຮອງເອົາ 6.007 ຕື້ກີບ, ດັດແກ້ມາເປັນ 5.807 ຕື້ກີບ, ຫລຸດລົງ 200 ຕື້ກີບ.

**ມາດຕາ 5:** ມອບໃຫ້ ປະທານ ຄະນະກຳມະການແຜນການ ແລະ ການລົງທຶນ ອອກແຈ້ງການໃຫ້ບັນດາກະຊວງ, ອົງການທຽບເທົ່າຂັ້ນສູນກາງ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດການດັດແກ້ແຜນການລົງທຶນຂອງລັດ 6 ເດືອນທ້າຍປີ ສົກປີ 2004-2005, ພ້ອມທັງຊີ້ນຳການ ຈັດຕັ້ງປະຕິບັດ ໃຫ້ທັນເວລາ.

**ມາດຕາ 6:** ມອບໃຫ້ລັດຖະມົນຕີວ່າການ ກະຊວງການເງິນ ປະຕິບັດການຄຸ້ມຄອງລາຍຮັບ-ລາຍຈ່າຍ ງົບປະມານຕາມມະຕິຕົກລົງ ຂອງສະພາແຫ່ງຊາດ ວ່າດ້ວຍການອານຸມັດໃຫ້ດັດແກ້ ຢ່າງເຂັ້ມງວດ.

**ມາດຕາ 7:** ມອບໃຫ້ບັນດາ ທ່ານລັດຖະມົນຕີວ່າການ, ຫົວໜ້າອົງການທຽບເທົ່າ, ເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າແຂວງ ແລະຫົວໜ້າເຂດພິເສດ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ ໃຫ້ລັດຖະບານໃນແຕ່ລະໄລຍະຢ່າງເປັນປົກກະຕິ.

**ມາດຕາ 8:** ດຳລັດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ 20 ພຶດສະພາ 2005 ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສ ປ ປ ລາວ**



ບຸນຍັງ ວໍລະຈິດ